ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3402

ກະຊວງສຶກສາທິການ ແລະ ກິລາ

ເລກທີ 3402 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 18 ສິງຫາ 2021

# ຂໍ້ຕົກລົງຂອງລັດຖະມົນຕີ

# ວ່າດ້ວຍມາດຕະຖານການຄັດເລືອກນັກຮຽນ-ນັກສຶກສາໄປສຶກສາຕ່າງປະເທດ ພາຍໃຕ້ທຶນການສຶກສາຂອງລັດຖະບານ ສປປ ລາວ ແລະ ທຶນການສຶກສາຈາກຕ່າງປະເທດ

- ອີງຕາມ ກົດໝາຍວ່າ ດ້ວຍການສຶກສາ, ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 253/ນຍ, ລົງວັນທີ 26 ພຶດສະພາ 2020.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

## ໝວດທີ1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ມາດຕະຖານ ແລະ ລະບຽບການ ກ່ຽວກັບວຽກງານການຄັດເລືອກນັກຮຽນ-ນັກສຶກສາໄປສຶກສາຕ່າງປະເທດ ເພື່ອເຮັດໃຫ້ວຽກງານດັ່ງກ່າວດຳເນີນຢ່າງເປັນລະບົບ, ຖືກຕ້ອງ, ສອດຄ່ອງກັບຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ຮັບປະກັນຄວາມເປັນເອກະພາບ, ໂປ່ງໃສ ແລະ ຖືກຕ້ອງກັບສະພາບຄວາມເປັນຈິງ ໃນການສ້າງຊັບພະຍາກອນມະນຸດ ເພື່ອຕອບສະໜອງຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ມາດຕາ 2 ຫຼັກການໃນການຄັດເລືອກ

ຫຼັກການໃນການຄັດເລືອກ ຕ້ອງ:

1) ສອດຄ່ອງກັບກົດໝາຍ ແລະ ນິຕິກຳຂອງ ສປປ ລາວ ແລະ ປະເທດເຈົ້າພາບ;
2) ຮັບປະກັນຄວາມໂປ່ງໃສ, ສະເໝີພາບ ແລະ ຍຸຕິທຳ;
3) ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ກັບການພັດທະນາເສດຖະກິດ-ສັງຄົມຕົວຈິງ.

ມາດຕາ 3 ມາດຕະຖານການຄັດເລືອກນັກຮຽນ-ນັກສຶກສາ ໄປສຶກສາຕ່າງປະເທດ

ມາດຕະຖານການຄັດເລືອກ ແມ່ນການກຳນົດເງື່ອນໄຂດ້ານວິຊາສະເພາະ, ຄຸນສົມບັດ, ອາຍຸ, ສຸຂະພາບ ເພື່ອເປັນມາດຕະຖານໃນການຄົ້ນຄວ້າຄັດເລືອກນັກຮຽນ-ນັກສຶກສາ ໄປສຶກສາຕ່າງປະເທດໃນລະດັບສາມັນສຶກສາ, ປະລິນຍາຕີ, ປະລິນຍາໂທ ແລະ ປະລິນຍາເອກ.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ໃຊ້ສຳລັບການຄົ້ນຄວ້າຄັດເລືອກນັກຮຽນ - ນັກສຶກສາລາວໄປສຶກສາຕ່າງປະເທດໃນຂອບເຂດທົ່ວປະເທດ.

## ໝວດທີ 2

## ມາດຕະຖານ ການຄັດເລືອກນັກຮຽນ - ນັກສຶກສາ

ມາດຕາ 5 ມາດຕະຖານ ການຄັດເລືອກນັກຮຽນ-ນັກສຶກສາ

ການຄັດເລືອກນັກຮຽນ-ນັກສຶກສາ ໄປສຶກສາຢູ່ຕ່າງປະເທດ ປະກອບດ້ວຍ 3 ມາດຕະຖານ ດັ່ງນີ້:

1) ມາດຕະຖານຜູ້ທີ່ຈະໄດ້ຮັບທຶນລະດັບສາມັນສຶກສາ;
2) ມາດຕະຖານຜູ້ທີ່ຈະໄດ້ຮັບທຶນລະດັບປະລິນຍາຕີ;
3) ມາດຕະຖານຜູ້ທີ່ຈະໄດ້ຮັບທຶນລະດັບປະລິນຍາໂທ ແລະ ປະລິນຍາເອກ.

ມາດຕາ 6 ມາດຕະຖານຜູ້ທີ່ຈະໄດ້ຮັບທຶນລະດັບສາມັນສຶກສາ

ນັກຮຽນ ສາມັນສຶກສາ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1) **ນັກຮຽນໄປຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ**

- ຕ້ອງຈົບຊັ້ນປະຖົມສຶກສາ ຫຼື ທຽບເທົ່າ ( ມີປະກາສະນີຍະບັດ ແລະ ມີເອກະສານຖືກຕ້ອງ, ຄົບຖ້ວນ ຄະແນນສະເລ່ຍ ຈົບຊັ້ນປະຖົມສຶກສາໄດ້ 7/10 ຂຶ້ນໄປ ) ແລະ ປະຕິບັດຕາມຂໍ້ກຳນົດຂອງສະຖານການສຶກສາທີ່ຈະໄປຮຽນ;
- ມີຄຸນສົມບັດດີ, ບໍ່ເຄີຍຖືກລົງວິໄນ ( ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ );
- ມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ ຫຼື ພະຍາດຊ້ຳເຮື້ອ ( ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ );

- ຕ້ອງໄດ້ຮັບການເຫັນດີຈາກຜູ້ປົກຄອງ.

2) **ນັກຮຽນໄປຮຽນຊັ້ນມັດທະຍົມສຶກສາຕອນປາຍ**

- ຕ້ອງຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ຫຼື ທຽບເທົ່າ ( ມີປະກາສະນີຍະບັດ ແລະ ເອກະສານຖືກຕ້ອງ, ຄົບຖ້ວນ, ຄະແນນສະເລ່ຍ ຈົບຊັ້ນມັດທະຍົມສຶກສາຕອນຕົ້ນໄດ້ 7/10 ຂຶ້ນໄປ ) ແລະ ປະຕິບັດຕາມຂໍ້ກຳນົດຂອງສະຖານການສຶກສາທີ່ຈະໄປຮຽນ;
- ມີຄຸນສົມບັດດີ, ບໍ່ເຄີຍຖືກລົງວິໄນ ( ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ );
- ມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ ຫຼື ພະຍາດຊ້ຳເຮື້ອ (ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ);
- ຕ້ອງໄດ້ຮັບການເຫັນດີຈາກຜູ້ປົກຄອງ.

**ມາດຕາ 7 ມາດຕະຖານຜູ້ທີ່ຈະໄດ້ຮັບທຶນລະດັບປະລິນຍາຕີ**

ນັກສຶກສາໄປຮຽນລະດັບປະລິນຍາຕີ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1) ຈົບມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ( ມີປະກາສະນີຍະບັດ ຫຼື ຕາມຂໍ້ກຳນົດຂອງແຕ່ລະທຶນການສຶກສາ );
2) ມີຄຸນສົມບັດດີ, ບໍ່ເຄີຍຖືກລົງວິໄນ ( ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ );
3) ມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ ຫລື ພະຍາດຊ້ຳເຮື້ອ (ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວ ຂ້ອງ );
4) ລະດັບພາສາຕ່າງປະເທດ ແມ່ນອີງຕາມປະເພດຂອງທຶນການສຶກສາ, ຜູ້ໄດ້ພາສາປະເທດທີ່ໄປຮຽນຈະໄດ້ຮັບບຸລິມະສິດໃນການຄັດເລືອກ;
5) ອາຍຸບໍ່ເກີນ 35 ປີ ໃນມື້ຍື່ນໃບສະໝັກ;
6) ຜູ້ທີ່ຈະຖືກຄັດເລືອກ ຕ້ອງມີຄະແນນສະເລ່ຍໄດ້ 7/10 ຂຶ້ນໄປ; ຄະແນນໃນການຄັດເລືອກ ແມ່ນ ອີງໃສ່ຄະແນນເສັງຈົບຊັ້ນມັດທະຍົມສຶກສາຕອນປາຍ ແລະ ຄະແນນຮຽນ ມ.5, ມ.6 ແລະ ມ.7 ຊຶ່ງສັງລວມເປັນ "ຄະແນນສະເລັ່ຍລວມ" ເປັນຫຼັກໃນການສົມທຽບ.

**ມາດຕາ 8 ມາດຕະຖານຜູ້ທີ່ຈະໄດ້ຮັບທຶນລະດັບປະລິນຍາໂທ**

ນັກສຶກສາໄປຮຽນລະດັບປະລິນຍາໂທ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1) ຕ້ອງຈົບປະລິນຍາຕີໃນສາຂາວິຊາທີ່ກ່ຽວຂ້ອງ; ຕ້ອງມີຄະແນນສະເລັ່ຍດັ່ງນີ້:

ກ. ກໍລະນີ ຄະແນນສ່ວນ 10 ຕ້ອງມີຄະແນນ 7/10 ຂຶ້ນໄປ,

ຂ. ກໍລະນີ ໄປຄົ້ນຄວ້າສາຍວິທະຍາສາດສັງຄົມ ໃຫ້ມີຄະແນນສະສົມສະເລັ່ຍ ( CGPA ) ໄດ້ B (3.0) ຂຶ້ນໄປ ແລະ ກໍລະນີ ໄປຄົ້ນຄວ້າສາຍວິທະຍາສາດທຳມະຊາດ ໃຫ້ມີຄະແນນສະສົມສະເລັ່ຍ ( CGPA ) ໄດ້ B ( 2.5 ) ຂຶ້ນໄປ,

ຄ. ກໍລະນີ ພະນັກງານ ຫຼື ຜູ້ເຮັດວຽກ ມີປະສົບການ 02 ປີ ຂຶ້ນໄປ, ຫຼື ປະຕິບັດຕາມຂໍ້ກຳນົດຂອງທຶນການສຶກສາ;

2) ມີຄຸນສົມບັດດີ, ບໍ່ເຄີຍຖືກລົງວິໄນ ( ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ );

3) ມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ ຫຼື ພະຍາດຊໍ້າເຮື້ອ; ( ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ );

4) ລະດັບພາສາແມ່ນອີງຕາມປະເພດຂອງທຶນການສຶກສາ ແລະ ມີໃບຢັ້ງຢືນການຮຽນພາສາ, ຜູ້ໄດ້ພາສາຂອງປະເທດທີ່ຈະໄປຮຽນ ໃຫ້ບູລິມະສິດໃນການຄັດເລືອກ;

5) ອາຍຸບໍ່ເກີນ 40 ປີ ໃນມື້ຍື່ນໃບສະໝັກ ຫຼື ອີງຕາມແຫຼ່ງທຶນການສຶກສາ;

6) ໃຫ້ບູລິມະສິດແກ່ຂົງເຂດ ຕາມແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດກໍານົດ ແລະ ຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

7) ພິຈາລະນາໃຫ້ມີຈໍານວນຜູ້ທີ່ຮູ້ພາສາຕ່າງປະເທດ ຫຼື ຮຽນຈົບຈາກປະເທດທີ່ຈະໄປຮຽນໃນສັດສ່ວນທີ່ເໝາະສົມ;

8) ຄວາມສອດຄ່ອງລະຫວ່າງ ສາຂາວິຊາທີ່ສະໝັກໄປຮຽນ ຫຼື ຫົວບົດຄົ້ນຄວ້າ ກັບຄວາມຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ;

9) ມີສັນຍາເວລາຮຽນຈົບຕ້ອງກັບຄືນປະເທດ ເຮັດວຽກງານຕາມຄວາມຮຽກຮ້ອງຕ້ອງການຂອງການຈັດຕັ້ງ ແລະ ປະເທດຊາດ.

**ມາດຕາ 9 ມາດຕະຖານຜູ້ທີ່ຈະໄດ້ຮັບທຶນລະດັບປະລິນຍາເອກ**

ນັກສຶກສາໄປຮຽນລະດັບປະລິນຍາເອກ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1) ຕ້ອງຈົບປະລິນຍາໂທໃນສາຂາວິຊາທີ່ກ່ຽວຂ້ອງ; ຕ້ອງມີຄະແນນສະເລັ່ຍດັ່ງນີ້:

ກ. ກໍລະນີ ຄະແນນສ່ວນ 10 ຕ້ອງມີຄະແນນ 7/10 ຂຶ້ນໄປ;

ຂ. ກໍລະນີ ໄປຄົ້ນຄວ້າສາຍວິທະຍາສາດສັງຄົມ ໃຫ້ມີຄະແນນສະສົມສະເລັ່ຍ ( CGPA ) ໄດ້ B (3.0) ຂຶ້ນໄປ ແລະ ກໍລະນີ ໄປຄົ້ນຄວ້າສາຍວິທະຍາສາດທໍາມະຊາດ ໃຫ້ມີຄະແນນສະສົມສະເລັ່ຍ (CGPA) ໄດ້ B ( 2.5 ) ຂຶ້ນໄປ;

ຄ. ກໍລະນີ ພະນັກງານ ຫຼື ຜູ້ເຮັດວຽກມີປະສົບການ 02 ປີ ຂຶ້ນໄປ ຫຼື ປະຕິບັດຕາມຂໍ້ກໍານົດຂອງທຶນການສຶກສາ;

2) ມີຄຸນສົມບັດດີ, ບໍ່ເຄີຍຖືກລົງວິໄນ (ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ);

3) ມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ ຫຼື ພະຍາດຊໍ້າເຮື້ອ ( ຜ່ານການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວ ຂ້ອງ);

4) ລະດັບພາສາແມ່ນອີງຕາມປະເພດຂອງທຶນການສຶກສາ ແລະ ມີໃບຢັ້ງຢືນການຮຽນພາສາ, ຜູ້ໄດ້ພາສາຂອງປະເທດທີ່ຈະໄປຮຽນ ໃຫ້ບູລິມະສິດໃນການຄັດເລືອກ;

5) ອາຍຸບໍ່ເກີນ 50 ປີ ໃນມື້ຍື່ນໃບສະໝັກ ຫຼື ອີງຕາມປະເພດຂອງທຶນການສຶກສາ;

6) ໃຫ້ບູລິມະສິດແກ່ຂົງເຂດ ຕາມແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດກໍານົດ ແລະ ສອດຄ່ອງກັບຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

7) ພິຈາລະນາໃຫ້ມີຈໍານວນຜູ້ທີ່ຮູ້ພາສາຕ່າງປະເທດ ຫຼື ຮຽນຈົບຈາກປະເທດໄປຮຽນ ໃນສັດສ່ວນທີ່ເໝາະສົມ;

໘) ຄວາມສອດຄ່ອງລະຫວ່າງ ສາຂາວິຊາທີ່ສະໝັກໄປຮຽນ ຫຼື ຫົວບົດຄົ້ນຄວ້າ ກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ;

໙) ມີສັນຍາເວລາຮຽນຈົບຕ້ອງກັບຄືນປະເທດ ເຮັດວຽກງານຕາມຄວາມຮຽກຮ້ອງຕ້ອງການຂອງການຈັດຕັ້ງ ແລະ ປະເທດຊາດ.

## ໝວດທີ 3

## ວິທີການ ແລະ ຂັ້ນຕອນການຈັດຕັ້ງປະຕິບັດການຄັດເລືອກນັກຮຽນ-ນັກສຶກສາໄປສຶກສາ ຕ່າງປະເທດ

### ມາດຕາ 10 ວິທີການຈັດຕັ້ງປະຕິບັດການຄັດເລືອກນັກຮຽນ-ນັກສຶກສາ ໄປສຶກສາຕ່າງປະເທດ

1) ຄະນະຮັບຜິດຊອບທີ່ຖືກແຕ່ງຕັ້ງຈາກທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ນັດປະຊຸມ, ວາງແຜນປະຕິບັດ, ສັງລວມບັນດານິຕິກໍາທີ່ກ່ຽວຂ້ອງ ພ້ອມກໍານົດເວລາປະຕິບັດໃຫ້ລະອຽດ;
2) ຈັດບຸລິມະສິດຂອງຜູ້ສະໝັກຮັບທຶນ, ຄົ້ນຄວ້າເປັນລາຍບຸກຄົນ;
3) ລາຍງານຜົນການຄົ້ນຄວ້າຄັດເລືອກນັກຮຽນ-ນັກສຶກສາ ເພື່ອສະເໜີຄະນະນໍາກະຊວງສຶກສາທິການ ແລະ ກິລາ ພິຈາລະນາຮັບຮອງ.

### ມາດຕາ 11 ຂັ້ນຕອນການຈັດຕັ້ງປະຕິບັດການຄັດເລືອກນັກຮຽນ-ນັກສຶກສາ ໄປສຶກສາຕ່າງປະເທດ

1) ຂັ້ນຕອນທີ 1: ກໍລະນີໄດ້ຮັບການແຈ້ງທຶນການສຶກສາຈາກຜູ້ໃຫ້ທຶນ, ກົມກິດຈະການນັກສຶກສາ ຈະສະຫຼຸບສັງລວມລາຍງານໃຫ້ຄະນະນໍາກະຊວງສຶກສາທິການ ແລະ ກິລາ ຮັບຊາບ ແລະ ຂໍທິດຊີ້ນໍາ;
2) ຂັ້ນຕອນທີ 2: ຫ້ອງການກະຊວງສຶກສາທິການ ແລະ ກິລາ ແຈ້ງການເປີດຮັບສະໝັກ;
3) ຂັ້ນຕອນທີ 3: ສັງລວມບັນຊີລາຍຊື່ຜູ້ສະໝັກ ແລະ ກວດກາເອກະສານໃຫ້ຖືກຕ້ອງຕາມເງື່ອນໄຂຜູ້ໃຫ້ທຶນເຊັ່ນ: ປຽບທຽບຄະແນນ ແລ້ວຈັດລຽງລໍາດັບ; ກວດເບິ່ງຄຸນສົມບັດ ຊຶ່ງສາມາດກວດໄດ້ຈາກຄະແນນຄຸນສົມບັດ, ການສອບຖາມ ຄູອາຈານ ແລະ ຄະນະອໍານວຍການໂຮງຮຽນກ່ຽວຂ້ອງ, ການສອບຖາມການຈັດຕັ້ງຕົ້ນສັງກັດ ແລະ ອື່ນໆ; ກວດເບິ່ງລະດັບພາສາຕ່າງປະເທດ ຂອງຜູ້ສະໝັກ; ກວດເບິ່ງເງື່ອນໄຂອາຍຸ, ສຸຂະພາບ, ສະພາບປອດຄະດີ; ກວດເບິ່ງເງື່ອນໄຂຮຽນຈົບ ແລະ ຮຽນກຽມພາສາຢູ່ສະຖາບັນການສຶກສາ; ໂດຍທົ່ວໄປ ການຄັດເລືອກຕົວຈິງນັ້ນ ແມ່ນໃຫ້ຄໍານຶງເຖິງຄວາມເປັນຈິງຢ່າງເໝາະສົມ ເພື່ອໃຫ້ໂອກາດແກ່ທຸກຄົນ; ໃຫ້ບຸລິມະສິດຜູ້ຮຽນເກັ່ງທີ່ຫາກໍ່ຈົບຈາກຕ່າງປະເທດ ໂດຍມີໜັງສືສະໜັບສະໜູນຈາກສະຖາບັນການສຶກສາ ແລະ ຈາກສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສູນໃຫຍ່ ແຫ່ງ ສປປ ລາວ ປະຈໍາ ປະເທດນັ້ນໆ;

4) ຂັ້ນຕອນທີ 4: ຄະນະກໍາມະການຄົ້ນຄວ້າທຶນການສຶກສາ ຈັດກອງປະຊຸມເພື່ອຄົ້ນຄວ້າ ແລະ ສັງລວມຜົນການຄັດເລືອກຕາມມາດຕະຖານ ແລະ ເງື່ອນໄຂຄັດເລືອກ ເພື່ອນໍາສະເໜີຄະນະນໍາກະຊວງສຶກສາທິການ ແລະ ກິລາ ພິຈາລະນາຮັບຮອງ;

5) ຂັ້ນຕອນທີ່ 5: ປະກາດແຈ້ງຜົນການຄັດເລືອກໃຫ້ນັກຮຽນ-ນັກສຶກສາຮັບຊາບ ແລະ ປະກອບເອກະສານໃຫ້ຄົບຖ້ວນຕາມຂໍ້ກໍານົດ;

6) ຂັ້ນຕອນ ທີ 6: ໃຫ້ຄໍາປຶກສາ, ແນະນໍາບາງດ້ານ ແລະ ກວດກາຄວາມຖືກຕ້ອງດ້ານເອກະສານຕ່າງໆ ກ່ອນມື້ອອກເດີນທາງ.

### ມາດຕາ 12 ການກໍານົດເວລາຈັດຕັ້ງປະຕິບັດການຄັດເລືອກ

ການກໍານົດເວລາ ຈັດຕັ້ງປະຕິບັດການຄັດເລືອກນັກຮຽນ - ນັກສຶກສາໄປສຶກສາຕ່າງປະເທດ ແມ່ນໄດ້ອີງຕາມຂໍ້ກໍານົດ ແລະ ເງື່ອນໄຂຂອງປະເພດທຶນການສຶກສາ.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບການຄັດເລືອກ

### ມາດຕາ 13 ຄະນະຮັບຜິດຊອບການຄັດເລືອກ

ກ. ຄະນະຮັບຜິດຊອບຊີ້ນໍາການຄັດເລືອກ ປະກອບດ້ວຍ:

1) ທ່ານ ລັດຖະມົນຕີ ຫຼື ຮອງລັດຖະມົນຕີຜູ້ຊີ້ນໍາກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ ເປັນປະທານ;
2) ທ່ານ ຫົວໜ້າກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ;
3) ທ່ານ ຫົວໜ້າກົມພົວພັນຕ່າງປະເທດ ເປັນກໍາມະການ;
4) ທ່ານ ຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນກໍາມະການ;
5) ທ່ານ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນກໍາມະການ.

ຂ. ຄະນະກໍາມະການຄົ້ນຄວ້າຄັດເລືອກ ປະກອບດ້ວຍ:

1) ທ່ານ ຫົວໜ້າກົມກິດຈະການນັກສຶກສາ ເປັນຫົວໜ້າຄະນະ;
2) ທ່ານ ຮອງຫົວໜ້າກົມກິດຈະການນັກສຶກສາ ຜູ້ຊີ້ນໍາວຽກງານຄຸ້ມຄອງທຶນການສຶກສາ ແລະ ນັກສຶກສາ ເປັນຮອງ;
3) ທ່ານ ຮອງຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນ ຄະນະ;
4) ທ່ານ ຮອງຫົວໜ້າກົມພົວພັນຕ່າງປະເທດ ເປັນຄະນະ;
5) ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ.

ຄ. ຄະນະເລຂານຸການ

1) ທ່ານ ຮອງຫົວໜ້າກົມກິດຈະການນັກສຶກສາ ຜູ້ຊີ້ນໍາວຽກງານຄຸ້ມຄອງທຶນການສຶກສາ ແລະ ນັກສຶກສາ ເປັນຫົວໜ້າ;

2) ທ່ານ ຫົວໜ້າພະແນກຄຸ້ມຄອງທຶນການສຶກສາ ແລະ ນັກສຶກສາ ເປັນຮອງ;

3) ທ່ານ ຮອງຫົວໜ້າພະແນກຄຸ້ມຄອງທຶນການສຶກສາ ແລະ ນັກສຶກສາ ເປັນຄະນະ;

4) ທ່ານ ຮອງຫົວໜ້າສູນບໍລິການນັກສຶກສາ ເປັນຄະນະ;

5) ວິຊາການພະແນກບໍລິຫານ ແລະ ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ ເປັນຄະນະ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບການຄັດເລືອກ**

**ກ. ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບຊີ້ນຳການຄັດເລືອກ**

1) ຊີ້ນຳການຄົ້ນຄວ້າທຶນການສຶກສາ ພາຍໃຕ້ທຶນການສຶກສາຂອງລັດຖະບານ ສປປ ລາວ ແລະ ທຶນການສຶກສາຈາກຕ່າງປະເທດ;

2) ຊີ້ນຳການປະສານງານກັບພາກສ່ວນກ່ຽວຂ້ອງ ແລະ ການວາງແຜນຈັດຕັ້ງປະຕິບັດ;

3) ລາຍງານ ແລະ ຂໍທິດຊີ້ນຳຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເພື່ອຈັດຕັ້ງປະຕິບັດ;

4) ປະຕິບັດວຽກງານອື່ນໆຕາມການມອບໝາຍຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ.

**ຂ. ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄົ້ນຄວ້າຄັດເລືອກ**

1) ເປັນເສນາທິການໃຫ້ແກ່ຄະນະນຳກະຊວງສຶກສາທິການ ແລະ ກິລາ ກ່ຽວກັບການຄົ້ນຄວ້າຄັດເລືອກນັກຮຽນ-ນັກສຶກສາໄປສຶກສາຕ່າງປະເທດ;

2) ຮຽກປະຊຸມຄະນະຮັບຜິດຊອບທີ່ຖືກແຕ່ງຕັ້ງເພື່ອປຶກສາຫາລືໃນການວາງແຜນດຳເນີນງານໃນແຕ່ລະໄລຍະ;

3) ຄົ້ນຄວ້າ, ວາງແຜນ, ປັບປຸງ ແລະ ສ້າງນິຕິກຳກ່ຽວກັບການຄຸ້ມຄອງ ແລະ ການຄັດເລືອກນັກຮຽນນັກສຶກສາໄປສຶກສາຕ່າງປະເທດ;

4) ປະສານງານກັບຜູ້ໃຫ້ທຶນເພື່ອກຳກົດເວລາໃນການແຈ້ງທຶນການສຶກສາ ແລະ ຈັດຕັ້ງປະຕິບັດ;

5) ລາຍງານຜົນການຄົ້ນຄວ້າການຄັດເລືອກໃຫ້ຄະນະນຳກະຊວງສຶກສາທິການ ແລະ ກິລາ ເພື່ອພິຈາລະນາ.

**ຄ. ສິດ ແລະໜ້າທີ່ຂອງຄະນະເລຂານຸການ**

ນຳສະເໜີການປະກາດແຈ້ງການທຶນການສຶກສາ, ສັງລວມລາຍຊື່ຜູ້ສະໝັກທຶນການສຶກສາ ແລະ ຈັດບູລິມະສິດ ແລະ ລາຍງານໃຫ້ຄະນະກຳມະການຄົ້ນຄວ້າຄັດເລືອກ.

**ມາດຕາ 15 ແບບແຜນວິທີເຮັດວຽກຂອງຄະນະຮັບຜິດຊອບການຄັດເລືອກ**

1) ການເຮັດວຽກ ຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະແບ່ງໃຫ້ບຸກຄົນຮັບຜິດຊອບ ແລະ ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ;

2) ການເຮັດວຽກຕ້ອງຮັບປະກັນຄວາມໂປ່ງໃສ, ຍຸຕິທຳ, ສອດຄ່ອງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3) ຜົນການຄົ້ນຄວ້າແຕ່ລະທຶນ ຕ້ອງໄດ້ຮັບການເຫັນດີ ແລະ ເປັນເອກະພາບຂອງຄະນະຮັບຜິດຊອບທີ່ຖືກແຕ່ງຕັ້ງ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 16 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນໆ ມີພຶດຕິກຳດັ່ງນີ້:

1) ໂຄສະນາຕົວະຍົວະຫຼອກລວງເອົາພົນລະເມືອງລາວໄປສຶກສາຕ່າງປະເທດ ໂດຍບໍ່ໄດ້ຮັບອານຸຍາດຈາກກະຊວງສຶກສາທິການ ແລະ ກິລາ;
2) ການທີ່ຈະສົ່ງນັກຮຽນ - ນັກສຶກສາໄປສຶກສາຢູ່ຕ່າງປະເທດ ຕ້ອງໄດ້ຮັບການອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ.

### ມາດຕາ 17 ຂໍ້ຫ້າມສຳລັບນັກຮຽນ-ນັກສຶກສາ

ຫ້າມນັກຮຽນ-ນັກສຶກສາ ໄປສຶກສາຕ່າງປະເທດມີພຶດຕິກຳ ດັ່ງນີ້:

1) ຫ້າມປອມແປງເອກະສານ, ໃຫ້ສິນບົນແກ່ຄະນະກຳມະການຄັດເລືອກ ແລະ ບຸກຄົນອື່ນໆ;
2) ເມື່ອຜູ້ສະໝັກທຶນໄດ້ຮັບອະນຸມັດຮັບທຶນການສຶກສາແລ້ວ ຫ້າມປ່ຽນວິຊາຮຽນ ແລະ ປ່ຽນສະຖານທີ່ການສຶກສາ;
3) ຫຼັງຈາກໄດ້ຮັບທຶນການສຶກສາ ຫຼື ໄລຍະທີ່ລໍຖ້າການໄປສຶກສາ, ຫ້າມນັກຮຽນ-ນັກສຶກສາ ພົວພັນ: ຊື້-ຂາຍ, ເສບສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກອານາຈານ, ຫຼິ້ນການພະນັນທຸກປະເພດ, ບໍ່ໃຫ້ກິນ, ດື່ມ, ຊຸມແຊວເກີນຂອບເຂດ; ຫ້າມຄ້າຂາຍເຖື່ອນ, ສ້າງພັກພວກກຸ່ມກ້ອນເພື່ອກໍ່ຄວາມບໍ່ສະຫງົບຢູ່ໃນສະຖານການສຶກສາ ແລະ ສັງຄົມ ແລະ ອື່ນໆ;
4) ຫ້າມທຸກການກະທຳທີ່ເປັນການລະເມີດກົດໝາຍ, ລະບຽບການ, ແລະ ຮີດຄອງປະເພນີຂອງຊາວລາວບັນດາ ເຜົ່າ ແລະ ຂອງປະເທດເຈົ້າພາບທີ່ຈະໄປສຶກສາ;
5) ຖ້າມີກໍລະນີໃດໜຶ່ງເກີດຂຶ້ນທີ່ໄດ້ກ່າວມາຂ້າງເທິງນັ້ນ ຜູ້ທີ່ໄດ້ຮັບທຶນຈະຖືກຕັດສິດ ແລະ ລຶບຊື່ອອກຈາກຂໍ້ຕົກລົງ.

### ມາດຕາ 18 ຂໍ້ຫ້າມສຳລັບພະນັກງານທີ່ກ່ຽວຂ້ອງ

1) ຫ້າມໂຄສະນາທຸກແຫຼ່ງທຶນການສຶກສາກ່ອນໄດ້ຮັບອະນຸມັດ;
2) ຫ້າມຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານຂອງຕົນ;
3) ຫ້າມແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນ;
4) ຫ້າມເປີດເຜີຍ ຫຼື ເຜີຍແຜ່ ເອກະສານ, ຂໍ້ມູນຕ່າງໆ ແລະ ຜົນຂອງການຄົ້ນຄວ້າ ຕັດສິນໃຫ້ທຶນການສຶກສາ ທີ່ຍັງບໍ່ທັນມີຂໍ້ຕົກລົງຮັບຮອງ ແລະ ອະນຸມັດ;
5) ຫ້າມປອມແປງເອກະສານ, ສວຍໃຊ້ໜ້າທີ່, ຮັບສິນບົນ ຫຼື ສ້າງເງື່ອນໄຂເພື່ອໃຫ້ໄດ້ຮັບສິນບົນ;
6) ຫ້າມໂຄສະນາທຸກແຫຼ່ງທຶນການສຶກສາ, ຄົ້ນຄວ້າ ແລະ ຈັດສົ່ງພົນລະເມືອງລາວໄປສຶກສາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງສຶກສາທິການ ແລະ ກິລາ;

7) ຫ້າມມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 19 ການປັບປຸງ ແລະ ການປ່ຽນແປງ ມາດຕະຖານການຄັດເລືອກ ນັກຮຽນ-ນັກສຶກສາ**

ກໍລະນີມີການປັບປຸງແລະປ່ຽນແປງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ຮັບການຊີ້ນຳ ແລະ ເຫັນດີຈາກຄະນະນຳກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 20 ການຈັດຕັ້ງປະຕິບັດ**

ມອບໃຫ້ ຫ້ອງການກະຊວງສຶກສາທິການ ແລະ ກິລາ, ບັນດາກົມ, ສະຖາບັນ, ສູນຕ່າງໆ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ, ສະຖານການສຶກສາຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ

ບ່ອນສົ່ງ:

1. ຫ້ອງການ, ກົມ,ສະຖາບັນ,ສູນ ພາກສ່ວນລະ 1 ສະບັບ
2. 4 ມະຫາວິທະຍາໄລ ແຫ່ງລະ 1 ສະບັບ
3. ພະແນກສຶກສາທິການ ແລະ ກິລານະຄອນຫຼວງ/ແຂວງ ແຂວງລະ 1 ສະບັບ
4. ເກັບມ້ຽນ 1 ສະບັບ